# ສຳເລັດກອງປະຊຸມໃຫ່ຍໜ່ວຍພັກຫ້ອງການ ທຫລ




ກອງປະຊຸມໃຫ່ຍຄັ້ງທີ່ IV ໜ່ວຍພັກຫ້ອງການ ທະນາຄານ ແຫ່ງ ສປປ ລາວ (ທຫລ) ໄດ້ສຳເລັດລົງດ້ວຍໝາກຜົນອັນງົດງາມໃນຕອນທ່ຽງຂອງວັນທີ 22 ມັງກອນ ຜ່ານມາໂດຍພາຍໃຕ້ການເປັນປະທານຂອງສະຫາຍ ອໍ້ ວິລະພັນ ຄະນະພັກ ທະຄານແຫ່ງ ສປປ ລາວ, ເລຂາໜ່ວຍພັກ-ຫົວໜ້າຫ້ອງການ ທະນາຄານ ແຫ່ງ ສປປ ລາວ ໂດຍເປັນກຽດເຂົ້າຮ່ວມຂອງສະຫາຍ ພູເພັດ ຄຳພູນວົງ ເລຂາຄະນະພັກ, ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ນອກນັ້ນກໍ່ມີບັນດາຄະນະພັກ-ຄະນະໜ່ວຍພັກ ຈາກບັນດາ ທະນາຄານ ທຸລະກິດ-ກົມກອງອ້ອມຂ້າງ ທຫລ ແລະສະມາຊິກພັກພາຍໃນໜ່ວຍເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໃຫ່ຍດັ່ງກ່າວ, ສະຫາຍ ອໍ້ ວິລະພັນ ເລຂາໜ່ວຍພັກກໍໄດ້ຢືນຢັນເຖິງໝາກຜົນແຫ່ງການຊີ້ນຳ-ນຳພາ ແລະ ຈັດຕັ້ງການປະຕິບັດໃນໄລະຜ່ານມາເຊິ່ງສາມາດຍາດໄດ້ບັນດາຜົນສຳເລັດອັນພົ້ນເດັ່ນໃນຫຼາຍດ້ານໂດຍສະເພາະແມ່ນການເປັນເລຂາທິການໃຫ້ແກ່ຄະນະ

ພັກ-ຄະນະຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ແລະ ໜ່ວຍພັກ ຫ້ອງການ ຍັງໄດ້ຖືກຮັບຮອງເປັນໜ່ວຍພັກເຂັ້ມແຂງ-ຮູ້ນໍາພາຮອບດ້ານຢ່າງສົມກຽດຈາກຄະນະພັກຂັ້ນເທິງ, ພ້ອມນັ້ນສະຫາຍເລຂາ ໜ່ວຍພັກ ຍັງໄດ້ຍົກໃຫ້ເຫັນຈຸດອ່ອນ ແລະ ຂໍ້ຄົງຄ້າງ ທີ່ຈະພ້ອມກັນສືບຕໍ່ແກ້ໄຂໃນສະເພາະໜ້າ ແລະ ຜ່ານແຜນການທິດທາງແຜນການ ແລະ ຄາດໝາຍສູ້ຊົນໃນຕໍ່ໜ້າ.

ກອງປະຊຸມໃຫ່ຍຄັ້ງນີ້ຍັງໄດ້ດໍາເນີນການປ້ອນບັດເລືອກຕັ້ງເອົາຄະນະໜ່ວຍພັກຊຸດໃໝ່ເຊິ່ງສະຫາຍ ອໍ້ ວິລະພັນ ໄດ້ຮັບການເລືອກຕັ້ງເປັນເລຂາໜ່ວຍພັກອີກເທື່ອໃໝ່, ຈາກນັ້ນກໍ່ໄດ້ປ່ອນບັດເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫ່ຍຄັ້ງທີ່ II ຂອງອົງຄະນະພັກ ທະນາຄານ ແຫ່ງ ສປປ ລາວ ທີ່ຈະເປີດຂື້ນໃນຕໍ່ໜ້ານີ້.

ໃນໂອກາດດັ່ງກ່າວ ສະຫາຍ ພູເພັດ ຄໍາພູນວົງ ເລຂາໜ່ວຍພັກ ທະນາຄານ ແຫ່ງ ສປປ ລາວ ໄດ້ໃຫ້ທິດຊີ້ນໍາຕໍ່ກອງປະຊຸມໃຫ່ຍໂດຍ ບາງຕອນ ສະຫາຍ ໄດ້ກ່າວວ່າ: ໜ່ວຍພັກຫ້ອງການເປັນໜ່ວຍພັກທີ່ມີຄວາມສໍາຄັນຫຼາຍເຊິ່ງເຮັດໜ້າທີ່ເປັນເລຂາທິການ, ເປັນໃຈກາງໃນການປະສານເຊື່ອມຕໍ່ ແລະ ເປັນກອງອໍານວຍການສ້າງເງື່ອນໄຂໃຫ້ແກ່ຄະນະພັກຂັ້ນເທິງ ແລະ ຮາກຖານພັກ-ໜ່ວຍພັກຕ່າງໆ, ໃນຕໍ່ໜ້ານີ້ຮຽກຮ້ອງໃຫ້ສືບຕໍ່ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ສະມາຊິກພັກ-ພັກນັກງານ, ເສີມຂະຫຍາຍແບບແຜນການນໍາພາ ແລະ ວິທີເຮັດວຽກ, ເພີ່ມທະວີການ ປັບປຸງກໍ່ສ້າງພັກໃຫ້ໜັກແໜ້ນຢ່າງຮອບດ້ານທາງຄຸນນະພາບ ແລະ ປະລິມານ, ພ້ອມນັ້ນກໍຕ້ອງເປັນແບບຢ່າງໃນທຸກທ່າທີວຽກງານ.